ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
********✧********

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອ
ການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ເລກທີ 159 /ຫກ
ນະຄອນຫລວງວຽງຈັນ, ວັນທີ: 31 MAR 2020

# ບົດບັນທຶກ ກອງປະຊຸມກຸ່ມວິຊາການ ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 01, 2020.

ກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 01, 2020 ໄດ້ໄຂຂຶ້ນໃນວັນທີ 20 ເດືອນ ມີນາ ປີ 2020, ເວລາ 08:30 ຢູ່ທີ່ຫ້ອງປະຊຸມຂອງຫ້ອງການ ຄຊກລ ໂດຍການເປັນປະທານຂອງ ທ່ານ ໂຈມແຍງ ແພງທອງສະຫວັດ ຫົວໜ້າຫ້ອງການ ຄຊກລ, ຄູ່ຮ່ວມງານຕ່າງໆ ລວມທັງພະນັກງານ ແລະ ວິຊາການຫ້ອງການ ຄຊກລ ເຂົ້າຮ່ວມຈຳນວນ: 11 ທ່ານ, ຍິງ: 05 ທ່ານ.

ໃນການກ່າວໄຂກອງປະຊຸມ, ທ່ານປະທານກອງປະຊຸມໄດ້ເນັ້ນໜັກເຖິງຈຸດປະສົງຂອງກອງປະຊຸມກຸ່ມວິຊາການ ແມ່ນກອງປະຊຸມ ເພື່ອແລກປ່ຽນສົນທະນາ, ປຶກສາຫາລືກ່ຽວກັບ ແນວທາງໃນການໂຄສະນາພິນຮ້າຍຂອງ ລບຕ ໃຫ້ປະຊາຊົນເຂົ້າໃຈ ແລະ ສາມາດຫຼີກລ່ຽງ ການເກີດອຸປະຕິເຫດຈາກ ລບຕ, ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຫ້ອງການ ຄຊກລ ໄດ້ທົບທວນບົດບັນທຶກກອງປະຊຸມຄັ້ງທີ່ຜ່ານມາໂດຍຫຍໍ້ພ້ອມກັບລາຍງານການເຄື່ອນໄຫວວຽກປະຈຳໄຕມາດ 01 ປີ 2020 ແລະ ແຜນຄາດຄະເນ ໃນໄຕມາດ 02 ປີ 2020 ເຊິ່ງໃນນີ້ແມ່ນຈະຊຸມໃສ່: ກອງປະຊຸມກຸ່ມວິຊາການ, ປະສານສົມທົບກັບ ກະຊວງຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວ ຈັດລາຍການວິທະຍຸ ຢູ່ 5 ແຂວງ, ຈັດກອງປະຊຸມທົບທວນອຸປະກອນໂຄສະນາພິນຮ້າຍຂອງ ລບຕ, ຈັດກອງປະຊຸມປະຈຳປີ ແລະ ທົບທວນປະຈຳປີກ່ຽວກັບການຈັດລາຍການວິທະຍຸໂຄສະນາພິນຮ້າຍຂອງ ລບຕ ທາງລາຍການວິທະຍຸຢູ່ 5 ແຂວງ.

ຈາກນັ້ນ ຕາງໜ້າຈາກບັນດາອົງການປະຕິບັດງານ ແລະ ຄູ່ຮ່ວມງານຕ່າງໆ ກໍ່ໄດ້ຜັດປ່ຽນກັນລາຍງານຜົນສຳເລັດໃນການປະຕິບັດວຽກງານຂອງຕົນໃນໄລຍະທີ່ຜ່ານມາ ແລະ ແຜນການເຄື່ອນໄຫວໃນໄຕມາດ 01, ປີ 2020 ໃນນີ້ໄດ້ມີ ທ່ານຜູ້ຕາງໜ້າ ກົມສື່ມວນຊົນ ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ, ທ່ານຜູ້ຕາງໜ້າ ກົມສົມລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ, ທ່ານຜູ້ຕາງໜ້າ ກົມຂະບວນການ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ຜູ້ຕາງໜ້າ ວິທະຍຸແຫ່ງຊາດລາວ, ທ່ານຜູ້ຕາງໜ້າ ອົງການເວີດສ໌ເອຢູເຄຊັນ (WEL), ທ່ານຜູ້ຕາງໜ້າ ອົງການສາກົນເພື່ອຄົນພິການ, ຜູ້ຕາງໜ້າອົງການແມັກ, ຜູ້ຕາງໜ້າບໍລິສັດລ້ານຊ້າງມິນິໂລມ ຊີເຜີ້ງ ໄດ້ລາຍງານຜົນສຳເລັດຂອງການເຄື່ອນໄຫວວຽກງານໃນໄຕມາດ 01, 2019 ແລະ ແຜນວຽກປະຈຳໄຕມາດ 02, 2020 ສ່ວນລາຍລະອຽດຂອງການເຄື່ອນໄຫວຂອງແຕ່ລະພາກສ່ວນພ້ອມດ້ວຍແຜນແມ່ນສາມາດເບິ່ງໄດ້ໃນເອກະສານຊ້ອນທ້າຍ.

ບ້ານສີສັງວອນ, ເມືອງໄຊເສດຖາ, ໂປສະນີ: 7261, ໂທ: (856-21) 262386, ແຟັກ : 262396,
ອີເມວ: uxo.nra@gmail.com, www.nra.gov.la

▪ ໜ່ວຍງານຊ່ວຍເຫລືອຜູ້ປະສົບເຄາະຮ້າຍ ສຳລັບອຸປະຕິເຫດແມ່ນມີ 7 ອຸປະຕິເຫດ ມີຜູ້ຖືກເຄາະຮ້າຍ 12 ຄົນ ລ້າສຸດແມ່ນຢູ່ເມືອງນອງ ແລະ ຊຽງຂວາງ ແມ່ນເກີດສອງຄັ້ງຢູ່ບ້ານດຽວກັນ ກໍລະນີຂຸດມັນສາຄູນສັບຖືກລະເບີດ ແລະ ເດັກນ້ອຍຫລິ້ນລະເບີດ.

-ກໍລະນີໄປຫາປາພົບລະເບີດບົມໃຫຍ່ ພົບເຫັນບົມໃຫຍ່ແລ້ວຈະເອົາກັບບ້ານແຕ່ລະເບີດແຕກໃສ່ໃນວັນທີ 14/03/2020 ນີ້ແມ່ນພຶດຕິກຳທີ່ກໍ່ໃຫ້ເກີດອຸປະຕິເຫດ ຖາງປ່າ, ເຮັດໄຮ່ ແລະ ດັງໄຟ.

ໜ່ວຍງານຖາມຂໍ້ມູນ ເລື່ອງການຝຶກອົບຮົມ ຄ່າໃຊ້ຈ່າຍສຳລັບອົງການຖ້າໄປຝຶກອົບຮົມຢູ່ຫ້ອງການທ່ານແມ່ນເຮົາຂໍຄ່າເບ້ຍລ້ຽງ ແຕ່ຕ້ອງຂໍຄຳເຫັນຈາກທ່ານຫົວໜ້າຫ້ອງການກ່ອນຈະເກັບແນວໃດສະເໜີເພີ່ມ ຫ້ອງການ ຄຊກລ ເຮົາພ້ອມສະເໜີ ຖ້າມາຝຶກຢູ່ຫ້ອງການ ຄຊກລ ແມ່ນທາງເຮົາຝຶກໃຫ້ຟີ.

**ໃນກອງປະຊຸມ ຍັງໄດ້ສົນທະນາ ແລະ ປຶກສາຫາລືກັນໃນຫຼາຍຫົວຂໍ້ທີ່ໜ້າສົນໃຈ:**

1. ກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຜ່ານມາແມ່ນບໍ່ສາມາດໂຄສະນາໄດ້ທົ່ວປະເທດ ແຕ່ປະຈຸບັນແມ່ນສາມາດໂຄສະນາໄດ້ທົ່ວປະເທດແລ້ວ, ບັນຫາ ແລະ ສິ່ງທ້າທາຍແມ່ນບາງຄົນຍັງບໍ່ສາມາດເຂົ້າເຖິງ ແລະ ຮັບຟັງໄດ້ເພາະບໍ່ມີອຸປະກອນຄື້ນ 56,7.

2. ວິທະຍຸແຫ່ງຊາດລາວ ການກວມພື້ນທີ່ແມ່ນປະຊາຊົນສາມາດຮັບຟັງໄດ້ສົມທົບກັບພະນັກງານໂຄສະນາສຶກສາຄວາມສ່ຽງໄພໃນຊຸມຊົນຂອງແຂວງ.

3. ກົມຂະບວນການ ສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວ ລໍຖ້າທຶນເພື່ອຈະໄດ້ຈັດຕັ້ງປະຕິບັດກິດຈະກຳ ອສບ ຊາວໜຸ່ມ, ເຮົາຈະມີແຜນສົມທົບຮ່ວມກິດຈະກຳກັບຫ້ອງການ ຄຊກລ ທີ່ແຂວງບໍລິຄຳໄຊ.

- ສະເໜີສ້າງຄວາມຍືນຍົງໃນໂຄງການ 5 ປີ ເພື່ອຈະສ້າງກິດຈະກຳນຳກັນ ຂໍເປັນສ້າງແຜນໃຫຍ່ຮ່ວມກັນໃນໄລຍະ 5 ປີ ເພື່ອຈະປະຢັດງົບປະມານ.

4. ອົງການ HI ໃຫ້ຄວາມຮູ້ກ່ຽວກັບຄວາມປອດໄພສຳລັບກຸ່ມຊຸມຊົນ, ການນຳສະເໜີພາບລວມຂອງໂຄງການໂດຍຫຍໍ້ໃນຊຸມຊົນ, ອຸປະກອນການແຈກຢາຍສ່ວນໃຫຍ່ແມ່ນປົກ, ສໍສີ, ສໍດຳ, ເສື້ອຍືດມີເບີ້ສາຍດ່ວນ, ກະເປົາພາຍມີເບີ້ສາຍດ່ວນ, ສະຕິກເກີ້ເບີ້ສາຍດ່ວນ.

- ກິດຈະກຳສົ່ງເສີມຄວາມສາມາດໃຫ້ຄູໃນຂົງເຂດບ້ານເປົ້າໝາຍໂຄງການ ແມ່ນໄດ້ລົງຕິດຕາມ ແລະ ປະເມີນຄຸນນະພາບຂອງຄູກ່ຽວກັບການຖ່າຍທອດຫລັກສູດ ລບຕ ແລະ ປະເມີນຄວາມເຂົ້າໃຈຂອງນັກຮຽນໃນຂັ້ນປະຖົມ.

5. ອົງການເວີດສ໌ເອຢູເຄຊັ່ນ (WEL) ໄດ້ສະໜັບສະໜູນ 20 ໜ່ວຍລະຄອນຕຸກກະຕາຂອງ 10 ແຂວງ (ແຂວງລະ 2 ໜ່ວຍ) ສະແດງກ່ຽວກັບບົດຮຽນ ລບຕ ເນື່ອງໃນໂອກາດສະຫລອງວັນແມ່ຍິງສາກົນວັນທີ 8 ເດືອນ ມີນາ.

- ໄດ້ສະໜັບສະໜູນຈັດກອງປະຊຸມຜູ້ຕາງໜ້າວິທະຍາໄລຄູທົ່ວປະເທດ ທັງ 8 ແຫ່ງ ເພື່ອປຶກສາຫາລືການນຳເອົາຫລັກສູດ ລບຕ ເຂົ້າໃນຫລັກສູດວິທະຍາໄລຄູ.

- ພັດທະນາປຶ້ມຄູ່ມືການສອນບົດຮຽນ ລບຕ ສຳລັບວິທະຍາໄລຄູ

- ເຫັນດີໃຫ້ນຳໃຊ້ກິດຈະກຳເສີມຫລັກສູດເຊັ່ນ: ສະແດງລະຄອນຕຸກກະຕາ, ຫລິ້ນບົດບາດສົມມຸດ, ຫລິ້ນເກມ, ຖາມ - ຕອບ ກ່ຽວກັບບົດຮຽນ ລບຕ ແລະ ອື່ນໆ.

6. ອົງການແມັກ ລົງໂຄສະນາຊຸມຊົນກ່ຽວກັບການໃຫ້ຄວາມຮູ້ເລື່ອງລະເບີດບໍ່ທັນແຕກ, ຜະລິດອຸປະກອນສື່ໂຄສະນາແຜ່ນພັບ, ປຶ້ມບັນທຶກ, ປົກຂຽນ.

7. ບໍລິສັດລ້ານຊ້າງມິນິໂລນ ຊີເພີ້ງ ດຳເນີຕາມເປົ້າໝາຍໂຄສະນາລົງໂຮງຮຽນປະຖົມ, ມັດທະຍົມ ສຳເລັດຜົນໄດ້ຮັບຜົນດີ, ມີອຸປະກອນແຈກຢາຍຈຳນວນຫລາຍ.

- ໄຕມາດ 1, 2020 ຈະລົງ 10 ໂຮງຮຽນຢູ່ໃນເມືອງວິລະ ການໂຄສະນາຕ່າງໆແມ່ນໄດ້ຮັບຜົນດີຫລາຍ.

- ຢາກໄປຮ່ວມແລກປ່ຽນນຳເມືອງອື່ນ ຈະເຮັດແນວໃດ ນອກຈາກລົງເມືອງວິລະ ແລ້ວຢາກໄປແລກປ່ຽນຢູ່ເມືອງນອງ.

**ໃນນີ້ຕອນທ້າຍຂອງກອງປະຊຸມ ທ່ານປະທານກອງປະຊຸມໄດ້ຊີ້ນຳວ່າ:**

1. ສະເໜີໃນກອງປະຊຸມໃນເຊື້ແນວ ເປັນຫຍັງ ສປປ ລາວ ບໍ່ເຮັດກິດຈະກຳການໂຄສະນາຫັນປ່ຽນຈາກສະໜາມລະເບີດມາເປັນສະໜາມກີລາ ສະເໜີກະຊວງສຶກສາວ່າຢູ່ເຂດໃດທີ່ຍັງຕ້ອງການ ແລະ ມີຄວາມສ່ຽງ ຈະໄດ້ສະເໜີໃນທີ່ປະຊຸມສາກົນ, ສະໜັບສະໜູນໂດຍໄນກໍ້ ເຄື່ອງກີລາ.
2. ກອງປະຊຸມ TWG ໄຕມາດ 2, 2020 ໃຫ້ມີເນື້ອໃນຄົບຖ້ວນ ບັນຫາພົ້ນເດັ່ນທີ່ຈະມາປຶກສາຫາລືກັນ ຕິດພັນກັບການກະກຽມເນື້ອໃນໃຫ້ບັນດາອົງການສະເໜີວ່າຢາກສະເໜີຫຍັງ.
3. ການສຳພາດເລື່ອງເງິນ 90 ລ້ານໂດລາ ຕ້ອງເຮັດໜັງສືຫາທ່ານປະທານ ອອກໂທລະພາບ, ວິທະຍຸໃຫ້ທ່ານປະທານເປັນຜູ້ລາຍງານ, ໜ່ວຍງານ MRE ສົມທົບກັບໜ່ວຍງານຮ່ວມມືສາກົນ.
4. ຫ້ອງການ ຄຊກລ ຈະເຮັດໜັງສືຫາກະຊວງສຶກສາໃນການນຳໃຊ້ວັດຖຸອຸປະກອນບໍ່ໃຫ້ໃຊ້ລະເບີດແທ້.
5. ໃຫ້ແຕ່ລະອົງການປະຕິບັດງານລາຍງານຫາ ຄຊກລ ມີອົງການໃດແດ່ທີ່ຈະໂຈະໃຫ້ລາຍງານ ຄຊກລ ຈະໄດ້ລາຍງານ ກະຊວງແຮງງານ.
6. ຕໍ່ກັບເຟດບຸກຈະເຮັດໜັງສືຫາທ່ານປະທານວ່າຈະເຮັດແນວໃດ ເພື່ອຂໍເປີດການນຳໃຊ້ເຟດບຸກຂອງຫ້ອງການ ຄຊກລ.
7. ບໍລິສັດລ້ານຊ້າງ ຊິເຜີ້ງ ເຮັດໜັງສືສະເໜີຫາຫ້ອງການປະສານງານແຂວງສະຫວັນນະເຂດ ເພື່ອພິຈາລະນາ.

**ໝາຍເຫດ:** ສຳລັບລາຍລະອຽດຂອງການເຄື່ອນໄຫວໄຕມາດ 01, 2020 ແລະ ແຜນການເຄື່ອນໄຫວໄຕມາດ 02, 2020 ຂອງບັນດາອົງການປະຕິບັດງານ, ທ່ານສາມາດເບິ່ງໄດ້ໃນເອກະສານຂັດຕິດ.

| | |
|---|---|
| **ປະທານກອງປະຊຸມ** | **ບັນທຶກກອງປະຊຸມໂດຍ:** |
| ຫ້ອງການ ຄຊກລ | Vilayphone |
| ໂຈນແຍງ ແພງທອງສະຫວັດ | |